ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
SOUVANNY HOME CENTER PUBLIC COMPANY
PHONETONGSAVAT RD , BAN PHONETONGSAVAT, CHANTHABULY DISTRICT, VIENTIANE CAPITAL
OFFICE TEL: (+856-21) 415645, FAX / TEL: (+856-21) 262984 , WWW.SOUVANNY.COM

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ເລກທີ: 0831/ສອນ

ນະຄອນຫຼວງວຽງຈັນ,ວັນທີ 15 ສິງຫາ 2019

ມະຕິ
ກອງປະຊຸມສະພາບໍລິຫານ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
ຄັ້ງທີ 02 ປະຈຳປີ 2019, ວັນທີ 15/08/2019

ກອງປະຊຸມສະພາບໍລິຫານຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ຄັ້ງທີ 02/2019 ໄດ້ເປີດຂຶ້ນໃນ ເວລາ 14:00 ໂມງ ຂອງວັນທີ 15 ສິງຫາ 2019 ທີ່ສຳນັກງານໃຫຍ່ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໂດຍເປັນ ປະທານຂອງ ທ່ານ ອຸ່ນ ຫຼ້າສຸກັນ, ປະທານສະພາບໍລິຫານ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ, ສະມາຊິກສະພາ ບໍລິຫານ ແລະ ຜູ້ທີ່ຖືກເຊີນເຂົ້າຮ່ວມ.

ກອງປະຊຸມໄດ້ປຶກສາຫາລືບັນຫາຕ່າງໆພ້ອມໄດ້ມີມະຕິຕົກລົງ ຕາມລາຍລະອຽດລຸ່ມນີ້:

1. **ມະຕິ:** ເຫັນດີຮັບຮອງບົດລາຍງານກອງປະຊຸມສະພາບໍລິຫານໃນຄັ້ງທີ 01/2019.
2. **ມະຕິ:** ເຫັນດີນຳບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດປະຈຳ 6 ເດືອນຕົ້ນປີ 2019 ແລະ ຮ່າງບົດ ລາຍງານການເງິນຂອງບໍລິສັດ ປະຈຳ 6 ເດືອນຕົ້ນປີ 2019 .
3. **ມະຕິ:** ເຫັນດີນຳແຜນການດຳເນີນທຸລະກິດຂອງບໍລິສັດປະຈຳ 6 ເດືອນທ້າຍປີ 2019.
4. **ມະຕິ:** ເຫັນດີໃຫ້ ທ່ານ ປະດິດ ວົງເສນາ ເປັນປະທານຄະນະກຳມະການກວດສອບ, ທ່ານ ອຸ່ນ ຫຼ້າສຸກັນ ເປັນ ປະທານຄະນະກຳມະການຄຸ້ມຄອງຄວາມສ່ຽງ ແລະ ທ່ານ ບຸນເຕີມ ກົມມິດຕະພາບ ເປັນປະທານຄະນະ ກຳມະການກຳນົດຄ່າຕອບແທນ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ.
5. **ມະຕິ**: ເຫັນດີໃຫ້ນຳສະເໜີຕໍ່ກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2019 ຮັບຮອງ ແລະ ອະນຸມັດ ຂາຍສິ່ງເສດເຫຼືອປະເພດ ສິນຄ້າ ແລະ ຊັບສິນ ທີ່ຕິດພັນກັບພະແນກ ລົບ ແລະ ຂົ້ນໄດເລື່ອນ ພ້ອມທັງມອບ ສິດໃຫ້ຜູ້ອຳນວຍການໃຫຍ່ບໍລິສັດ ດຳເນີນການຕ່າງໆທີ່ກ່ຽວຂ້ອງກັບການຂາຍສິ່ງເສດເຫຼືອ ດັ່ງກ່າວຈົນ ສຳເລັດ ລວມເຖິງການມອບສິດໃຫ້ບຸກຄົນອື່ນດຳເນີນການດັ່ງກ່າວໄດ້ນຳອີກ.
6. **ມະຕິ:** ເຫັນດີໃຫ້ມີການຍົກປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2019 ໃນວັນທີ 09 ຕຸລາ 2019 ເວລາ 14.00 ໂມງ ຢູ່ທີ່ ຫ້ອງປະຊຸມໃຫຍ່ ຊັ້ນ 8 ອາຄານຕະຫຼາດຫຼັກຊັບລາວ, ບ້ານ ໂພນທັນເໜືອ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ ໂດຍມີວາລະດັ່ງນີ້:
   6.1 ຂໍອະນຸມັດຂາຍສິ່ງເສດເຫຼືອປະເພດສິນຄ້າ ແລະ ຊັບສິນ ທີ່ຕິດພັນກັບພະແນກ ລົບ ແລະ ຂົ້ນໄດເລື່ອນ.
7. **ມະຕິ**: ເຫັນດີໃຫ້ກຳນົດເອົາວັນທີ 30 ສິງຫາ 2019 ເປັນມື້ປິດປຶ້ມບັນຊີຜູ້ຖືຮຸ້ນຂອງບໍລິສັດ ເພື່ອກຳນົດ ລາຍຊື່ຜູ້ຖືຮຸ້ນທີ່ມີສິດເຂົ້າຮ່ວມປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2019 .

8. **ມະຕິ**: ເຫັນດີໃຫ້ແຕ່ງຕັ້ງ ທ່ານ ອານົນ ໄຊຍະວົງ ແລະ ທ່ານ ບຸນຖົມ ຟອງວິລາດ ໃຫ້ເປັນຜູ້ຕາງໜ້າບໍລິສັດ ຈົດທະບຽນເຊິ່ງມີຄວາມຮູ້ທາງດ້ານກົດໝາຍ ເພື່ອປະກອບສ່ວນເຂົ້າໃນຄະນະກວດກາກອງປະຊຸມວິສາມັນຜູ້ຖືຮຸ້ນ ແລະ ລົງຄະແນນສຽງ ຕາມລະບຽບ ແລະ ກົດໝາຍທີ່ກ່ຽວຂ້ອງ ໃນສ່ວນການແຕ່ງຕັ້ງຕົວແທນຜູ້ຖືຮຸ້ນ ລາຍຍ່ອຍນັ້ນ ເຫັນດີມອບອຳນາດໃຫ້ ທ່ານ ພັນໂນລາ ສຸຄະບັນດິດ ແຕ່ງຕັ້ງໂດຍຄັດເລືອກເອົາຈາກຜູ້ຖືຮຸ້ນ ລາຍຍ່ອຍທີ່ເຂົ້າຮ່ວມກອງປະຊຸມວິສາມັນຜູ້ຖືຮຸ້ນມື້ດັ່ງກ່າວເຊິ່ງເປັນຜູ້ຖືຮຸ້ນລາຍຍ່ອຍຄືຖືຮຸ້ນບໍ່ເກີນ 5 ສ່ວນຮ້ອຍຂອງຈຳນວນຮຸ້ນທີ່ຈົດທະບຽນ ແລະ ຊຳລະແລ້ວທັງໝົດ ແລະ ເປັນຜູ້ທີ່ມີຄຸນນະສົມບັດຕາມລາຍລະອຽດທີ່ກ່າວມາຂ້າງເທິງ.

ກອງປະຊຸມໄດ້ປິດລົງເວລາ 16:30 ໂມງ ຂອງວັນດຽວກັນ.

ປະທານສະພາບໍລິຫານ
ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ທ່ານ ອຸ່ນ ຫຼ້າສຸກັນ